## ເຄັດລັບ ແລະ ຄໍາແນະນໍາ

- ປູກພືດເພື່ອເປັນອາຫານໃຫ້ໝູເຊິ່ງສາມາດຊ່ວຍຫຼຸດຜ່ອນຕົ້ນທຶນໃນການຊື້ອາຫານສໍາເລັດຮູບ ເນື່ອງຈາກວ່າໝູພັນພື້ນເມືອງມັກຈະກິນອາຫານເພື່ອເພີ່ມນໍ້າໜັກ (FCR) ແລະ ອັດຕາການເຕີບໂຕຕໍ່ມື້ (ADG) ຄ່ອນຂ້າງຕໍ່າ
- ນໍາໃຊ້ລະບົບການໝູນວຽນຍ້າຍບ່ອນ (Paddock Rotation) ເພື່ອປ້ອງກັນການຂຸດດິນຫຼາຍເກີນໄປ ແລະ ຮັກສາຄຸນະພາບທົ່ງຫຍ້າໃຫ້ຍືນຍົງ
- ແຍກໝູຕາມອາຍຸ ແລະ ຂະໜາດ ບໍ່ລ້ຽງປະປົນກັນ ເພື່ອສະດວກໃນການຈັດການ ແລະ ຫຼຸດຄວາມຄຽດຂອງສັດ.

## ການປ້ອງກັນພະຍາດຂອງໝູ

- ບໍ່ອະນຸຍາດໃຫ້ບຸກຄົນພາຍນອກເຂົ້າພື້ນທີ່ ຫຼື ຖ້າຈໍາເປັນຕ້ອງປ່ຽນເສື້ອຜ້າ ແລະ ເກີບກ່ອນເຂົ້າ.
- ອຸປະກອນການໃຫ້ອາຫານສັດ ຄວນນໍາໃຊ້ສະເພາະສໍາລັບໝູເທົ່ານັ້ນ.
- ເຄື່ອງມືຕ່າງໆ ຄວນນໍາໃຊ້ສະເພາະໃນກິດຈະກໍາການລ້ຽງໝູເທົ່ານັ້ນ
- ພະນັກງານຕ້ອງປ່ຽນເກີບ ແລະ ລ້າງມືໃຫ້ສະອາດກ່ອນ ແລະ ຫຼັງການຈັບໝູ.
- ບໍ່ຄວນນໍາໃຊ້ພໍ່ພັນໝູກັບກຸ່ມອື່ນໆ (ຫ້າມນໍາໃຊ້ຮ່ວມກັນຫຼາຍກຸ່ມ).




ຜູ້ແຕ່ງ:

- **ທ່ານ ແພງ ຊາໂພຄໍາ**, ເຈົ້າຂອງສວນ, <Xaphokham.phaeng@gmail.com>,
- ໂທລະສັບ: +856 20 97090797



ວັນທີເຜີຍແຜ່: **ມີນາ 2026**


## ປະສົບການຂອງຊາວກະສິກອນ



ຟາມ Merci ຕັ້ງຢູ່ໃນປະເທດລາວ ໄດ້ເລີ່ມຕົ້ນການດໍາເນີນງານໃນຊ່ວງທ້າຍປີ 2022 ໂດຍມີເປົ້າໝາຍເພື່ອສະໜັບສະໜູນຊາວກະສິກອນຂະໜາດນ້ອຍ ໃຫ້ຫັນມາໃຊ້ແນວທາງກະສິກໍາແບບຍືນຍົງ, "Merci" (ມີຄວາມໝາຍວ່າ "ຂອບໃຈ" ໃນພາສາຝຣັ່ງ) ບົ່ງບອກເຖິງການຂອບໃຈຕໍ່ການຮ່ວມມືຂອງຫຼາຍຝ່າຍທີ່ເຮັດໃຫ້ຟາມແຫ່ງນີ້ເກີດຂຶ້ນ. ຟາມນີ້ເຮັດກ່ຽວກັບການຜະລິດ ແລະ ເປັນສວນຮຽນຮູ້ດ້ານການເຮັດກະສິກໍາແບບຍືນຍົງ (Permaculture) ໂດຍເນັ້ນໃສ່ວິທີການເຮັດກະສິກໍາທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຊ່ວຍໃຫ້ຊຸມຊົນທ້ອງຖິ່ນສາມາດປັບຕົວຕໍ່ຜົນກະທົບຈາກການປ່ຽນແປງສະພາບພູມອາກາດ. ຟາມໄດ້ປະສົມປະສານພູມປັນຍາການເຮັດກະສິກໍາແບບດັ້ງເດີມຂອງລາວ ກັບເຕັກນິກສະໄໝໃໝ່ ເພື່ອສ້າງລະບົບການຜະລິດອາຫານທີ່ມີຄວາມຍືນຍົງ ແລະ ເຂັ້ມແຂງ.

**ທ່ານ ແພງ ຊາໂພຄໍາ** ເຈົ້າຂອງຟາມ ມີຄວາມຕັ້ງໃຈ ແລະ ມັກຮັກໃນການແບ່ງປັນຄວາມຮູ້. ຫຼັງຈາກໄດ້ໄປຮຽນຮູ້ກ່ຽວກັບການເຮັດກະສິກໍາແບບຍືນຍົງ (Permaculture) ແລະ ກະສິກໍາອິນຊີ ຢູ່ປະເທດອົດສະຕາລີ ລາວໄດ້ກັບຄືນມາປະເທດລາວ ເພື່ອນໍາໃຊ້ ແລະ ຫັນປ່ຽນແນວທາງການເຮັດກະສິກໍາເຫຼົ່ານີ້ໃນພື້ນທີ່.

www.ali-sea.org


### ທີມງານ ອາລີເຊຍ

- ຜູ້ປະສານງານຂັ້ນພາກພື້ນ: **ລູຊີ ເຣໂນ** <reynaud@gret.org>
- ກອງເລຂາອາລີເຊຍ ປະຈໍາລາວ: **ສຸຕິມາ ບຸດວິເສດ** <soutima2506@gmail.com>



ສະໜັບສະໜູນໂດຍ: Agroecology and Safe Food System Transitions

ປະສານງານໂດຍ: GRET, cirad

Funded by: AFD, Co-funded by the European Union, Fonds Français pour l'Environnement Mondial

ເອກະສານນີ້ສ້າງຂຶ້ນໂດຍການສະໜັບສະໜູນດ້ານການເງິນຈາກອົງການຝຣັ່ງເພື່ອການພັດທະນາ (AFD), ສະຫະພາບເອີຣົບ (EU) ແລະ ກອງທຶນຝຣັ່ງເພື່ອສິ່ງແວດລ້ອມໂລກ (FFEM). ທັດສະນະທີ່ສະແດງອອກໃນເອກະສານສະບັບນີ້ຈະບໍ່ຖືວ່າເປັນການສະແດງທັດສະນະທີ່ເປັນທາງການຂອງ ອົງການ AFD, EU ແລະ FFEM.




ALiSEA AGROECOLOGY LEARNING ALLIANCE IN SOUTH EAST ASIA

# ແຜ່ນພັບດ້ານເຕັກນິກວິຊາການ

# ລະບົບການລ້ຽງໝູແບບປ່ອຍມີຂອບເຂດ

ພື້ນທີ່ຂອງການຈັດຕັ້ງປະຕິບັດ
ຫຼວງພະບາງ, ປະເທດລສາວ.

**ລະບົບນິເວດກະສິກໍາ**

| ພື້ນທີ່ | ກິດຈະກໍາຫຼັກ | ສະພາບອາກາດ | ປະລິມານນໍ້າຝົນ | ສະພາບອາກາດ |
|---|---|---|---|---|
| ທົ່ງພຽງ | ປູກເຂົ້າ/ ປູກຜັກ | ເຂດຮ້ອນຊຸ່ມຕາມລະດູການ (ລະດູຝົນ: ເດືອນມິຖຸນາ-ຕຸລາ) | ~ 1300 ມມ/ປີ | ອຸນຫະພູມສະເລ່ຍ ສູງສຸດ: 35°C - ຕໍ່າສຸດ: 14°C |





## ຄວາມເປັນມາ

### ລະບົບການລ້ຽງໝູແບບປ່ອຍມີຂອບເຂດ

ແຜ່ນພັບເຕັກນິກທາງວິຊາການສະບັບນີ້ແມ່ນໄດ້ນໍາສະເໜີແນວທາງ ແລະ ວິທີການຈັດຕັ້ງປະຕິບັດ ສໍາລັບການລິເລີ່ມ ແລະ ການບໍລິການຈັດການລະບົບການລ້ຽງໝູແບບປ່ອຍມີຂອບເຂດ ໂດຍມີເນື້ອໃນສໍາຄັນເຊັ່ນ: ການເຮັດຄອກໝູ, ການເຮັດຄອກຫຍ້າ, ການວາງແຜນການໃຫ້ອາຫານ ແລະ ການຜະລິດອາຫານ ເພື່ອເພີ່ມໂພຊະນາການຂອງໝູ. ໂດຍເນັ້ນໃສ່ຫຼັກການນິເວດກະສິກໍາ (Agroecology) ເພື່ອສົ່ງເສີມການນໍາໃຊ້ແນວທາງການປະຕິບັດທີ່ເປັນມິດຕໍ່ສິ່ງແວດລ້ອມເຊັ່ນ: ການຮັກສາຄຸນະພາບດິນ, ຄວາມຫຼາກຫຼາຍທາງຊີວະນາໆພັນ ແລະ ການນໍາໃຊ້ຊັບພະຍາກອນຢ່າງມີປະສິດທິພາບ. ແຜ່ນພັບສະບັບນີ້ແມ່ນແທດເໝາະກັບຊາວກະສິກອນຂະໜາດນ້ອຍຫາຂະໜາດກາງ ໂດຍມີເປົ້າໝາຍເພື່ອປັບປຸງຄຸນະພາບຂອງສັດ, ເພີ່ມປະສິດທິພາບການໃຫ້ອາຫານ ແລະ ເພີ່ມມູນຄ່າຜົນຜະລິດ ໂດຍຜ່ານວິທີການປະຢັດຕົ້ນທຶນ ແລະ ການວາງແຜນຢ່າງເໝາະສົມ.

## ຂັ້ນຕອນ 01: ການເຮັດຄອກໝູ ແລະ ຮົ້ວ.



- ພາຍໃນຄອກ, ໃຫ້ຈັດສັນພື້ນທີ່ຢ່າງໜ້ອຍ 40 ຕາແມັດຕໍ່ລູກໝູໜຶ່ງໂຕ ເພື່ອການເຕີບໃຫຍ່ມີສຸຂະພາບທີ່ດີ ແລະ ຫຼຸດຜ່ອນຄວາມຄຽດ.
- ຮົ້ວຄວນໃຊ້ຕາໜ່າງເຫຼັກທີ່ມີຄວາມທົນທານ ແຕ່ມີກໍຕົ້ນທຶນທີ່ສູງ, ດັ່ງນັ້ນເພື່ອເພີ່ມທາງເລືອກ ເຮົາສາມາດໃຊ້ຮົ້ວໄຟຟ້າເພື່ອຫຼຸດຜ່ອນຕົ້ນທຶນໃນການແບ່ງພື້ນທີ່ຂອງຄອກຫຍ້າ. ຄວາມສູງຂອງຮົ້ວປະມານ 1 ແມັດ ແມ່ນເໝາະສໍາລັບລູກຫມູນ້ອຍ ແລະ ຫມູທີ່ກໍາລັງເຕີບໂຕ.
- ສ້າງບ່ອນກະກຽມໃຫ້ອາຫານ (ເຮືອນຄົວສໍາລັບໝູ) ເພື່ອໃຊ້ໃນການປຸງແຕ່ງ ຫຼື ກະກຽມການອາຫານໃຫ້ແກ່ໝູ.

## ຂັ້ນຕອນ 02: ການຜະລິດອາຫານຈາກພືດ



- ເພື່ອຍົກລະດັບການລ້ຽງໝູຢ່າງຍືນຍົງ, ຄວນປູກພືດຫຼາຍຊະນິດໃນພື້ນທີ່ເຊັ່ນ: ສາລີ, ມັນຕົ້ນ, ເຜືອກ (ຈາກທໍາມະຊາດ), ຕົ້ນກ້ວຍ (ຕົ້ນ ແລະ ໝາກ), ໝາກອຶ, ພືດຕະກູນຖົ່ວ ເຊັ່ນ: ຫຍ້າສໄຕໂລ ແລະ ຫຍ້າເນເປຍ. ສໍາລັບມັນຕົ້ນ ແລະ ພືດຕະກູນຖົ່ວ ມັນຕົ້ນ ແມ່ນແນະນໍາໃຫ້ປູກເນື່ອງຈາກມີຄຸນຄ່າທາງໂພຊະນາທີ່ສູງ.
- ອາຫານໝູຄວນມາຈາກສາມແຫຼ່ງຄື: ອາຫານຈາກທໍາມະຊາດ, ພືດທີ່ປູກໃນສວນ ແລະ ວັດຖຸດິບຈາກຕະຫຼາດພາຍນອກ. ການປະສົມປະສານນີ້ຮັບປະກັນຄວາມໝັ້ນຄົງຂອງອາຫານສັດ, ຫຼຸດຜ່ອນຕົ້ນທຶນ ແລະ ເພີ່ມຄວາມຍືນຍົງພາຍໃນສວນ.

## ຂັ້ນຕອນ 03: ການໃຫ້ອາຫານ ແລະ ການຈັດການ



- ໂດຍປົກກະຕິແລ້ວ ໝູຈະກິນອາຫານສອງຄັ້ງ/ມື້ ໃນຕອນເຊົ້າ ແລະ ຕອນແລງ, ໂດຍຄວາມຖີ່ ແລະ ປະລິມານການໃຫ້ອາຫານຈະຖືກປັບປ່ຽນຕາມອາຍຸ, ນໍ້າໜັກ ແລະ ຂັ້ນຕອນການຜະລິດ (ເຊັ່ນ: ໝູທີ່ກໍາລັງໃຫຍ່, ໝູຂຸນ, ແມ່ໝູທີ່ຖືພາ). ສັດສ່ວນຂອງອາຫານແຕ່ລະປະເພດຄວນໄດ້ຮັບການປັບປ່ຽນຕາມອາຫານປະຈໍາວັນ.
- ສັງເກດເບິ່ງຄວາມໄວຂອງການກິນ; ຖ້າອາຫານຍັງເຫຼືອຫຼັງຈາກ 5-7 ນາທີ, ປະລິມານອາຫານນັ້ນຫຼາຍເກີນໄປ ແລະ ຄວນຫຼຸດປະລິມານລົງ.
- ສໍາລັບໝູນ້ອຍ ແລະ ໝູແມ່ກ່ອນການປະສົມພັນ ຄວນເພີ່ມອາຫານສໍາເລັດຮູບໃນປະລິມານນ້ອຍ (ປະມານ 1 ກໍາມື) ລົງໃນອາຫານທີ່ປຸງສຸກແລ້ວ ເພື່ອເພີ່ມສານອາຫານໃຫ້ພຽງພໍ ແລະ ເສີມສ້າງການຈະເລີນເຕີບໂຕ ແລະ ພັດທະນາການທີ່ດີ.
- ສໍາລັບໝູນ້ອຍ ໃນໄລຍະປັບປ່ຽນອາຫານຈາກນົມແມ່ ໄປສູ່ອາຫານປຸງແຕ່ງ ອາດເກີດອາການຖອກທ້ອງໄດ້; ການເພີ່ມກ້ວຍ ຫຼື ຖ່ານໃນອາຫານ ສາມາດຊ່ວຍຫຼຸດຜ່ອນ ແລະ ບັນເທົາອາການນີ້ໄດ້.

### ການຈັດການສວນ“Merci”

#### ຄອກໝູ

- ຄອກລ້ຽງຫມູປະກອບດ້ວຍ 5 ຄອກ, ແຕ່ລະຄອກມີຂະໜາດ 400 ຕາແມັດ. ຄອກໜຶ່ງມີລູກຫມູ 10 ໂຕ, 2 ຄອກບັນຈຸໝູແມ່ມານໄວ້ຄອກລະໂຕ, ອີກຄອກໜຶ່ງມີຫມູພໍ່ພັນ 2 ໂຕ ແລະ ຄອກສຸດທ້າຍມີ 3 ລັອກ ທີ່ມີແມ່ຫມູ 3 ໂຕລໍຖ້າການຜະສົມພັນ.
- ໃນເບື້ອງຕົ້ນເລີ່ມຕົ້ນດ້ວຍໂຕແມ່ 3 ໂຕ ແລະ ໝູພໍ່ພັນ 1 ໂຕ ໃນລາຄາ 20,000,000 ກີບ.

#### ຜົນລະປູກພາຍໃນສວນ

- ຄ່າໃຊ້ຈ່າຍປະມານ 17 ລ້ານ/ປີ (ກໍາລັງຄິດໄລ່) ສໍາລັບການຊື້ອາຫານສັດເພີ່ມເຕີມຈາກພາຍນອກປະກອບດ້ວຍ: ຮໍາ, ວິຕາມິນ, ອາຫານສໍາເລັດຮູບ ແລະ ອາຫານປຸງແຕ່ງ.
- ເນື້ອທີ່ປູກມັນຕົ້ນ 1 ເຮັກຕາ ແລະ ການປູກສາລີແມ່ນ 2000 ຕາແມັດ.